PLAN INTERNATIONAL

# ອົງການແພລນສາກົນ ປະຈຳ ສ ປ ປ ລາວ

## ປະກາດແຈ້ງການເຂົ້າຮ່ວມສົມທຽບລາຄາ ບໍລິການແປ ພາສາ

ອົງການແພລນສາກົນ ແມ່ນອົງການສາກົນທີ່ພັດທະນາຊຸມຊົນໂດຍຖືເອົາ ເດັກນ້ອຍເປັນໃຈກາງ ພວກເຮົາຊ່ວຍ ເຫຼືອເດັກທຸກຍາກຢູ່ຫຼາຍປະເທດທີ່ກຳລັງພັດທະນາໃນທົ່ວໂລກ. ປະຈຸບັນອົງການແພລນ ສາກົນປະຈຳ ສປປ ລາວ ກຳລັງຈັດຕັ້ງປະຕິບັດໂຄງ ການຢູ່ 4 ແຂວງ: ແຂວງ ບໍ່ແກ້ວ, ອຸດົມໄຊ, ສາລະວັນ, ຫຼວງພະບາງ ແລະ ມີຫ້ອງການໃຫຍ່ຢູ່ນະຄອນຫຼວງວຽງຈັນ. ແຕ່ລະປີອົງການແພລນໄດ້ມີການໃຊ້ບໍລິການ ການແປພາສາແບບປາກເປົ່າຈາກພາສາລາວ ເປັນ ອັງກິດ ແລະ ພາສາອັງກິດ ເປັນ ລາວ ແລະ ແປເອກະສານ ຈາກພາສາລາວ ເປັນ ອັງກິດ. ສະນັ້ນ, ອົງການແພລນສາກົນ ປະຈຳ ສປປ ລາວ ຂໍຖືໂອກາດແຈ້ງເຊີນມາຍັງ ບັນດາບໍລິສັດ ຫຼື ບຸກຄົນທີ່ມີປະສົບການນການແປພາສາ ທີ່ສົນໃຈ ປະກອບເອກະສານ ສົມທຽບລາຄາ ຕາມລາຍລະອຽດ ແລະ ເງື່ອນໄຂດັ່ງລຸ່ມນີ້.

**ຖ້າເປັນບໍລິສັດ**

- ສຳເນົາ ທະບຽນວິສາຫະກິດ ແລະ ສຳເນົາ ໃບອະນຸຍາດດຳເນີນທຸລະກິດ ທີ່ຍັງໃຊ້ໄດ້ 1 ຊຸດ
- ສຳເນົາ ໃບເສຍພາສີອາກອນປະຈຳປີ, ເອກະສານກ່ຽວກັບຜົນງານ ແລະ ປະຫວັດຂອງບໍລິສັດ 1 ຊຸດ
- ສົ່ງ ຊີວະປະຫວັດຂອງພະນັກງານ ລວມທັງສຳເນົາໃບປະກາດຈົບຊັ້ນ ແລະ ໃບຜ່ານງານ (ຖ້າມີ) 1 ຊຸດ
- ສຳເນົາ ຊີວະປະຫວັດ, ໃບປະກາດຈົບຊັ້ນ ແລະ ໃບຜ່ານງານ, ໃບຢັ້ງຢືນທີ່ຢູ່ ຫຼື ບັດປະຈຳຕົວ (ຖ້າເປັນສ່ວນບຸກຄົນ) 1 ຊຸດ
- ເອກະສານອື່ນໆ ແມ່ນໃຫ້ປະກອບຕາມ ເງື່ອນໄຂໃນເອກະສານຕິດຂັດ

**ໃບສະເໜີສົມທຽບລາຄາ**

- ຕື່ມລາຄາຕາມແບບຟອມຂອງອົງການແພລນ ຕາມລິ້ງ (link) ດັ່ງລຸ່ມນີ້ https://rb.gy/brpynv ແລະ ເປັນລາຄາບໍ່ປ່ຽນແປງ ພາຍໃນ 1 ປີ ຈຳນວນ 1 ຊຸດ

ບັນດາບໍລິສັດ ທີ່ມີຄວາມສົນໃຈ ກະລຸນາ ປະກອບເອກະສານ ແລະ ສົ່ງຫາຫ້ອງການ ອົງການແພລນສາກົນ ປະຈຳ ສປປ ລາວ ດັ່ງທີ່ຢູ່ຂ້າງລຸ່ມນີ້ ແລະ ມື້ສຸດທ້າຍໃນການຍື່ນເອກະສານສົມທຽບລາຄາແມ່ນບໍ່ໃຫ້ກາຍ **17:00 ໂມງແລງ ຂອງວັນທີ 30/05/2021**.

| *ຫ້ອງການອົງການແພລນປະຈຳນະຄອນຫລວງວຽງຈັນ* |
|---|
| ເຮືອນເລກທີ 203, ໜ່ວຍ 10, ບ້ານ ໂພນສີນວນ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ<br>ໂທຣ: +856 (0) 21 353 409 -11, ແຟັກ: +856 (0) 21 313 512 ຕູ້ ປນ 6026<br>ອີເມວ: Laos.procurement@plan-international.org |

__ໝາຍເຫດ:__

- ບໍລິສັດ ຫຼື ບຸກຄົນທີ່ມາຍື່ນເອກະສານສົມທຽບລາຄາ ຕ້ອງທີ່ຍິນດີທີ່ຈະເຮັດສັນຍາໄລຍະຍາວ ກັບອົງການ, ຮັບເງິນໂອນ, ຮັບແຊັກ (Check), ແລະ ສາມາດຕິດໜີ້ໄດ້.
- ເອກະສານ ແລະ ຂໍ້ມູນຖືກຕ້ອງຕາມເງື່ອນໄຂ ຕ້ອງປົກປິດເປັນຄວາມລັບ ແລະ ບັນຈຸໃນຊອງທີ່ປິດຢ່າງສະນິດແໜ້ນ, ການຕື່ມລາຄາຄວນຄິດໄລ່ໃນຄອມພິວເຕີ ຫຼື ຂຽນກໍໄດ້ ແຕ່ໃຫ້ລະອຽດ ແລະ ຫຼີກເວັ້ນການເປື້ອນ ຫຼື ຕື່ມຜິດ (ຖ້າມີການຄິດໄລ່ຜິດພາດຈະບໍ່ໄດ້ພິລະນາຕາມເງື່ອນໄຂ).
- ເອກະສານທີ່ທາງບໍລິສັດໄດ້ສົ່ງຫາ ອົງການແລ້ວບໍ່ສາມາດຖອນຄືນໄດ້.

ວັນທີ: 06 ພຶດສະພາ 2022

ອົງການແພລນສາກົນ ປະຈຳ ສປປ ລາວ

ແສງສັນຕິສຸກ ຊະນະສີສານ
ຮອງອຳນວຍການ ຝ່າຍບໍລິຫານ
ອົງການແພລນສາກົນ ປະຈຳ ສປປ ລາວ